ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

------000------

ແຂວງຊຽງຂວາງ

ສຳນັກງານປົກຄອງແຂວງ

ເລກທີ..10 /ຈຂ.ຊຂ.

ວັນທີ..8/9./2015

# ຄຳສັ່ງ:

ເຖິງ: ທ່ານເຈົ້າເມືອງ, ຫົວໜ້າພະແນກການ, ກົມກອງສູນກາງຢູ່ແຂວງຊຽງຂວາງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການຈັດຕັ້ງພັກ- ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນບັນດາເຜົ່າ.

ເລື່ອງ: ສະກັດກັ້ນການລັກລອບປູກຝິ່ນຂອງປະຊາຊົນ.

- ອີງຕາມກົດໝາຍວ່າດ້ວຍຢາເສບຕິດມາດຕາ146ແລະມາດຕາ 75, 76 ຂອງກົດໝາຍວ່າດ້ວຍຢາເສບຕິດສະບັບປັບປຸງ ກ່ຽວກັບການຜະລິດ, ຄ້າຂາຍ, ເສບ ຫຼື ມີຢາເສບຕິດໄວ້ຄອບຄອງ.

- ອີງຕາມຄຳສັ່ງ ເລກທີ 36 / ນຍ ລົງວັນທີ ລົງວັນທີ 12 ສິງຫາ 2014ວ່າດ້ວຍການເພີ່ມທະວີການຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ, ການປູກຝິ່ນ - ປູກກັນຊາ.

ໃນໄລຍະຜ່ານມາແຂວງຊຽງຂວາງພວກເຮົາໄດ້ເປັນແຂວງໜຶ່ງທີ່ໄດ້ປະກາດລົບລ້າງການປູກຝິ່ນຢ່າງສິ້ນເຊີງ, ປະຊາຊົນໂດຍທົ່ວໄປກໍ່ໄດ້ປະລະການປູກຝິ່ນແລະຈັດຫາອາຊີບໃໝ່ປ່ຽນແທນໃຫ້ແກ່ຜູ້ທີ່ຕິດຝິ່ນແລະໃຫ້ການເອົາໃຈໃສ່ເຂົ້າຮັບການບຳບັດ,ພ້ອມນີ້ອຳນາດການປົກຄອງທຸກຂັ້ນກໍ່ໄດ້ສະກັດກັ້ນການລັກລອບປູກຝິ່ນຄືນໃໝ່ດ້ວຍຫຼາຍຮູບຫຼາຍວິທີແຕ່ຄຽງຄູ່ກັນນີ້ກໍ່ຍັງເຫັນວ່າຍັງມີປະຊາຊົນຢູ່ເຂດຫ່າງໄກສອກຫຼີກຈຳນວນໜຶ່ງຍັງສືບຕໍ່ລັກລອບປູກຝິ່ນຄືນໃໝ່ໂດຍບໍ່ຄຳນຶງເຖິງດ້ານລະບຽບກົດໝາຍ. ອຳນາດການປົກຄອງ, ຄະນະກຳມະການກວດກາ-ຄວບຄຸມຢາເສບຕິດຂັ້ນຕ່າງໆກໍ່ບໍ່ໄດ້ເອົາໃຈໃສ່ກວດກາແລະຄວບຄຸມ ຫຼື ເມື່ອກວດເຫັນການປູກຝິ່ນກໍ່ບໍ່ໄດ້ເອົາໃຈໃສ່ແກ້ໄຂທີ່ເໝາະສົມຈຶ່ງເຮັດໃຫ້ສະພາບການລັກລອບປູກຝິ່ນຍັງເພີ່ມຂຶ້ນເປັນແຕ່ລະປີ.

ເພື່ອສະກັດກັ້ນບັນຫາດັ່ງກ່າວນີ້ໃນສົກປີ2015-2016 ອຳນາດການປົກຄອງແຂວງໃນນາມເຈົ້າແຂວງ ແຂວງຊຽງຂວາງຈຶ່ງອອກຄຳສັ່ງ:

1) ມອບໃຫ້ເຈົ້າເມືອງທຸກໆ ເມືອງເປັນເຈົ້າການ ແລະ ແກ້ໄຂການລັກລອບປູກຝິ່ນຢູ່ພາຍໃນເມືອງຂອງຕົນ, ໃຫ້ຢຸດຕິການປູກຢ່າງຂາດຕົວແລະບໍ່ໃຫ້ມີຂໍ້ອ້າງໃດໆເພື່ອຂໍປູກຝິ່ນ,ສຳລັບຄອບຄົວ,ບ້ານທີ່ຍັງມີການລັກລອບປູກຝິ່ນຜ່ານມາກໍ່ໃຫ້ເຮັດບົດບັນທຶກ ແລະ ຢຸດເຊົາ.

2) ຫ້າມປຸງແຕ່ງຜະລິດຕະພັນຈາກຕົ້ນຝິ່ນ,ຫ້າມວາງຂາຍເບ້ຍຝິ່ນ,ຕົ້ນຝິ່ນແຫ້ງ,ແກ່ນຝິ່ນຢູ່ຕາມທ້ອງຕະຫຼາດ, ມອບໃຫ້ເມືອງເປັນຜູ້ກວດກາ ແລະ ມີມາດຕະການອັນເດັດຂາດຕໍ່ຜູ້ລະເມີດນັບທັງການຄ້າຂາຍຢາເສບຕິດປະເພດຕ່າງໆ.

3) ຕໍ່ຜູ້ທີ່ຍັງລະເມີດມອບໃຫ້ເມືອງເປັນເຈົ້າການແກ້ໄຂ, ສຶກສາອົບຮົມ, ກ່າວເຕືອນ, ຖ້າຍັງຝືນດື້ໃຫ້ປະຕິບັດຕາມຂັ້ນຕອນຂອງກົດໝາຍຢ່າງເຂັ້ມງວດ.

4) ມອບໃຫ້ເມືອງຂຽນແຜນງານ, ໂຄງການລະອຽດກ່ຽວກັບການຈັດສັນອາຊີບໃຫ້ແກ່ຄອບຄົວທີ່ຍັງປູກຝິ່ນ, ການບໍາບັດຜູ້ຕິດຢາເສບຕິດໂດຍປະສານສົມທົບກັບພະແນກການທີ່ກ່ຽວຂ້ອງເຊັ່ນ: ພະແນກສາທາ, ພະແນກກະສິກໍາ-ປ່າໄມ້, ພະແນກອຸດສາຫະກໍາ - ການຄ້າ ແລະ ຫ້ອງການພັດທະນາຊົນນະບົດແຂວງເພື່ອສະເໜີຕໍ່ຂັ້ນເທິງ.

5) ມອບໃຫ້ຫ້ອງການກວດກາແລະຄວບຄຸມຢາເສບຕິດແຂວງສົມທົບກັບເມືອງເພື່ອຕິດຕາມກວດກາພ້ອມທັງລາຍງານຄວາມຄືບໜ້າ ແລະ ຂໍທິດຊີ້ນໍາຈາກຂັ້ນເທິງ.

6) ມອບໃຫ້ທຸກໆເມືອງ, ທຸກພະແນກການ, ທຸກກົມກອງສູນການຕັ້ງຢູ່ແຂວງ, ທຸກກົມກອງທ້ອງຖິ່ນ, ທຸກໆອົງການຈັດຕັ້ງ ແລະ ພໍ່ແມ່ປະຊາຊົນຈົ່ງເຂົ້າຮ່ວມສະກັດກັ້ນຢ່າງເຂັ້ມງວດ, ປະສານສົມທົບກັນເຮັດໃຫ້ການປູກຝິ່ນຍຸດຕິຢ່າງຊີ້ນເຊີງ.

ສໍາລັບງົບປະມານມອບໃຫ້ແຕ່ລະເມືອງ, ແຕ່ລະພະແນກການນໍາໃຊ້ງົບປະມານຂອງຕົນເພື່ອແກ້ໄຂວຽກງານດັ່ງກ່າວ.

ດັ່ງນັ້ນ: ຈິ່ງໄດ້ເຮັດຄໍາສັ່ງສະບັບນີ້ໃຫ້ແຕ່ລະເມືອງຮັບຊາບ ແລະ ພ້ອມກັນຮີບຮ້ອນຈັດຕັ້ງປະຕິບັດແກ້ໄຂໃຫ້ໄດ້ຮັບຜົນດີ, ຖ້າມີບັນຫາໃຫ້ລາຍງານ ແລະ ຂໍທິດຊີ້ນໍາຈາກແຂວງ.

ເຊັນສານ ເຈົ້າແຂວງ ແຂວງຊຽງຂວາງ.

ບົວສອນ ສີນວນທອງ